ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

<u>ສຳນັກງານນາຍົກລັດຖະມົນຕີ</u> ເລກທີ 159 -1 /ນຍ.

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການປະກາດໃຊ້ ແລະຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດ ສົກປີ 2003-2004

---

- ອີງໃສ່ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ.ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003
- ອີງໃສ່ ກົດຫມາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງປະກາດໃຊ້ໂດຍລັດຖະບັນຍັດ ຂອງປະທານປະເທດ ແຫ່ງ ສປປ. ລາວ ສະບັບເລກທີ 40 /ສປປ, ລົງວັນທີ 13 /08/ 1994;
- ອີງໃສ່ ມະຕິ ຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ V, ສະບັບເລກທີ 45/ ສພຊ.V, ລົງວັນທີ 10/ 10/ 2003 ວ່າດວ້ຍ ການຮັບຮອງເອົາ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ສົກປີ 2003-2004.

### ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ :

ມາດຕາ 1: ປະກາດໃຊ້ ແລະຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດ ສົກປີ 2003-2004, ເລີ້ມແຕ່ວັນທີ 01 ຕຸລາ ປີ 2003 ເຖິງວັນທີ 30 ກັນຍາ ປີ 2004 ຢ່າງເປັນເອກະພາບ ໃນຂອບ ເຂດທົ່ວປະເທດ.

ມາດຕາ 2. ແຜນພັດທະນາເສດຖະກິດ - ສັງຄົມ ແລະງົບປະມານແຫ່ງລັດ ສົກປີ 2003-2004 ແມ່ນແຜນ ຈັດຕັ້ງປະຕິບັດ ມະຕິກອງປະຊຸມ ຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ( ສະໄຫມທີ VII ) ແລະມະຕິກອງປະຊຸມ ສະໄຫມສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ V ໃຫ້ປະກົດຜົນເປັນຈິງ, ໂດຍມີທິດທາງແລະໜ້າທີ່; ບັນດາ ຄາດຫມາຍຕົ້ນຕໍ ແລະການດຸ່ນດ່ຽງໃຫຍ່ໆ ຂອງເສດຖະກິດມະຫາພາກ; ຄາດຫມາຍການລຶບລ້າງ ຄວາມທຸກຍາກ, ຫລຸດຜ່ອນການຖາງປ່າ-ເຮັດໄຮ່ ແລະຫລຸດຜ່ອນການປູກຝິ່ນ; ກຳນົດໂຄງປະກອບ ພັດທະນາຕາມຂະແໜງການ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

---

<u>**ສຳນັກງານນາຍົກລັດຖະມົນຕີ**</u>　　　　　　　　ເລກທີ 159/ນຍ.

# ດຳລັດ

## ຂອງນາຍົກລັດຖະມົນຕີ

## ວ່າດ້ວຍການປະກາດໃຊ້ ແລະຈັດຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດ ສົກປີ 2003-2004

---

- ອີງໃສ່ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ.ລາວ ສະບັບເລກທີ 02/ສພຊ, ລົງວັນທີ 6/5/2003
- ອີງໃສ່ ກົດຫມາຍວ່າດ້ວຍງົບປະມານແຫ່ງລັດ ຊຶ່ງປະກາດໃຊ້ໂດຍລັດຖະບັນຍັດ ຂອງປະທານປະເທດ ແຫ່ງ ສປປ. ລາວ ສະບັບເລກທີ 40 /ສປປ, ລົງວັນທີ 13 /08/ 1994;
- ອີງໃສ່ ມະຕິ ຂອງກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ V, ສະບັບເລກທີ 45/ ສພຊ.V, ລົງວັນທີ 10/ 10/ 2003 ວ່າດວ້ຍ ການຮັບຮອງເອົາ ແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານແຫ່ງລັດ ສົກປີ 2003-2004.

### ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ອອກດຳລັດ :

ມາດຕາ 1: ປະກາດໃຊ້ ແລະຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແລະງົບປະມານແຫ່ງລັດ ສົກປີ 2003-2004, ເລີ້ມແຕ່ວັນທີ 01 ຕຸລາ ປີ 2003 ເຖິງວັນທີ 30 ກັນຍາ ປີ 2004 ຢ່າງເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ມາດຕາ 2. ແຜນພັດທະນາເສດຖະກິດ - ສັງຄົມ ແລະງົບປະມານແຫ່ງລັດ ສົກປີ 2003-2004 ແມ່ນແຜນຈັດຕັ້ງປະຕິບັດ ມະຕິກອງປະຊຸມ ຄະນະບໍລິຫານງານສູນກາງພັກ ຄັ້ງທີ 7 ( ສະໄຫມທີ VII ) ແລະມະຕິກອງປະຊຸມສະໄຫມສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ V ໃຫ້ປະກົດຜົນເປັນຈິງ, ໂດຍມີທິດທາງແລະໜ້າທີ່; ບັນດາຄາດໝາຍຕົ້ນຕໍ ແລະການດຸ່ນດ່ຽງໃຫຍ່ໆ ຂອງເສດຖະກິດມະຫາພາກ; ຄາດຫມາຍການລຶບລ້າງ ຄວາມທຸກຍາກ, ຫລຸດຜ່ອນການຖາງປ່າ-ເຮັດໄຮ່ ແລະຫລຸດຜ່ອນການປູກຝິ່ນ; ກຳນົດໂຄງປະກອບ ພັດທະນາຕາມຂະແໜງການ

ແລະການພັດທະນາເຂດແຄວ້ນ; ກຳນົດແຜນງານໂຄງການ, ແຜນເງິນ, ແຜນຄົນ, ປັບດາມາດຕະການ ແລະມາດຕະການຕົ້ນຕໍ ເພື່ອຈັດຕັ້ງປະຕິບັດຕາມທິດທາງ ແລະຄາດໝາຍສູ້ຊົນ ທີ່ກຳນົດໄວ້ ໃນແຜນການ 5 ປີ (2001-2005) .

**ມາດຕາ 3: ຄາດໝາຍສູ້ຊົນ ດ້ານເສດຖະກິດມະຫາພາກ ໃນສົກປີ 2003-2004 ມີດັ່ງນີ້ :**

- ລວມຍອດຜະລິດຕະພັນພາຍໃນ (GDP) ທຽບໃສ່ສົກປີ 2002-03 ໃຫ້ເພີ້ມຂື້ນ 6,2% ໃນນັ້ນ :
  - + ຍອດຜະລິດຕະພັນກະສິກຳ-ປ່າໄມ້ ໃຫ້ເພີ້ມຂື້ນ 4% ກວມເອົາ 48,2% ຂອງ GDP.
  - + ຍອດຜະລິດຕະພັນອຸດສາຫະກຳ ໃຫ້ເພີ້ມຂື້ນ 10% ກວມເອົາ 26% ຂອງ GDP.
  - + ການບໍລິການໃຫ້ເພີ້ມຂື້ນ 6,5% ກວມເອົາ 25,8% ຂອງ GDP.
- ອັດຕາເງິນເຟີ້ ສະເລັ່ຍໝົດປີ ໃຫ້ຢູ່ໃນລະດັບຕົວເລກດຽວ ແລະຄວບຄຸມອັດຕາແລກປ່ຽນ ໃຫ້ມີສະຖຽນລະພາບ.
- ຄວບຄຸມການເພີ່ມຂື້ນ ຂອງປໍລິມາດເງິນລວມ ( M2 ) ບໍ່ໃຫ້ເກີນ 18% ທຽບໃສ່ປີຜ່ານມາ.
- ຮັກສາການຂາດດຸນການຊຳລະ ປົກກະຕິ ກັບຕ່າງປະເທດ ໃຫ້ຢູ່ໃນລະດັບ 3 - 5% ຂອງ GDP.
- ເກັບລາຍຮັບງົບປະມານພາຍໃນໃຫ້ໄດ້ 2.936 ຕື້ກີບ ຫລື ເທົ່າກັບ 12% ຂອງGDP, ທຽບໃສ່ສົກປີຜ່ານມາເພີ່ມຂື້ນ 15,5% ແລະຫຼຸດຜ່ອນການຂາດດຸນ ງົບປະມານລົງໃຫ້ຢູ່ໃນລະດັບ 9% ຂອງ GDP.
- ເຮັດໃຫ້ການລົງທຶນທົ່ວສັງຄົມ ກວມປະມານ 28% ຂອງ GDP, ໃນນັ້ນການລົງທຶນຂອງລັດ ກວມ 12% ຂອງ GDP; ການລົງທຶນ ຂອງເອກະຊົນພາຍໃນ ແລະຕ່າງປະເທດໃຫ້ໄດ້ 16% ຂອງ GDP, ລະດົມການລົງທຶນຂອງຕ່າງປະເທດໃຫ້ໄດ້ບໍ່ຫຼຸດສົກປີຜ່ານມາ.
- ຊົມຂວາຍຍາດແຍ່ງການຊ່ວຍເຫລືອລ້າ ແລະກູ້ຢືມຈາກຕ່າງປະເທດ ໃຫ້ໄດ້ປະມານ 433 ລ້ານໂດລາ.
- ຫລຸດຜ່ອນຈຳນວນຄອບຄົວທຸກຍາກລົງ ໃຫ້ໄດ້ປະມານ 50.000 ຄອບຄົວ, ຫລຸດຜ່ອນເນື້ອທີ່ໄຮ່ໃຫ້ໄດ້ 15.000 ຮຕ ແລະຫລຸດຜ່ອນເນື້ອທີ່ປູກຝິ່ນໃຫ້ໄດ້ 4.500 ຮຕ.
- ປະຕິບັດໂກຕາການຂຸດຄົ້ນໄມ້ ໃນສົກປີ 2003-2004 ຢ່າງເຂັ້ມງວດ, ບໍ່ໃຫ້ເກີນ 270.000 ( ສອງແສນເຈັດສິບພັນ ) ແມັດກອັນ.
- ຜະລິດເຂົ້າໃຫ້ໄດ້ 2,6 ລ້ານໂຕນ.
- GDP ສະເລັ່ຍໃສ່ຫົວຄົນໃຫ້ໄດ້ 380 ໂດລາ ຫລື ເທົ່າກັບ 4.180.000 ກີບ, ທຽບໃສ່ສົກປີຜ່ານມາ ເພີ່ມຂື້ນ 7,4% .

ມາດຕາ 4: ຕ້ອງສູ້ຊົນປະຕິບັດ ແຜນລາຍຮັບ ແລະລາຍຈ່າຍ ງົບປະມານປະຈຳປີ ຕາມຕົວເລກ ທີ່ສະພາແຫ່ງ ຊາດ ໄດ້ຮັບຮອງເອົາໄວ້ ໃຫ້ເປັນຈິງ ຄື :

4.1 ລວມຍອດລາຍຮັບທັງໝົດ ( ນັບທັງທຶນຊ່ວຍເຫລືອລ້າ ) 3.377,4 ຕື້ກີບ , ໃນນັ້ນ ລາຍຮັບງົບປະມານພາຍໃນ 2.936 ຕື້ກີບ , ທຽບໃສ່ການປະຕິບັດໃນສົກປີຜ່ານມາ ເພີ່ມຂື້ນ 15,5% , ໃນນັ້ນ:

+ ຈາກສ່ວຍສາອາກອນ 1.252,9 ຕື້ກີບ

+ ຈາກພາສີຂາເຂົ້າ-ຂາອອກ 906,3 ຕື້ກີບ

+ ຈາກທີ່ດິນ 35,1 ຕື້ກີບ

+ ຈາກຊັບສິນຂອງລັດ 559,9 ຕື້ກີບ

+ ລາຍຮັບວິຊາການ 32,0 ຕື້ກີບ

+ ລາຍຮັບຈາກການຊ່ວຍເຫລືອລ້າ ຂອງຕ່າງປະເທດ ນັບທັງເປັນໂຄງການ ແລະ ບໍ່ເປັນໂຄງການ 465,0 ຕື້ກີບ

+ ແຫລ່ງລາຍຮັບ ຈາກຊັບພະຍາກອນປ່າໄມ້ 150,0 ຕື້ກີບ

+ ລາຍຮັບຈາກກອງທຶນບູລະນະທາງ 23,8 ຕື້ກີບ

4.2 ແຜນລາຍຈ່າຍງົບປະມານແຫ່ງລັດທັງໝົດແມ່ນ 5.619,9 ຕື້ກີບ ຫຼື ເທົ່າກັບ 23% ຂອງ GDP, ທຽບໃສ່ປີຜ່ານມາ ເພີ່ມຂຶ້ນ 21,3% ລາຍຈ່າຍ ຕົ້ນຕໍ ປີ 2003-2004 ມີດັ່ງນີ້ :

1. ລາຍຈ່າຍເງິນເດືອນ 848,7 ຕື້ກີບ
2. ລາຍຈ່າຍບໍລິຫານ 384,0 ຕື້ກີບ
3. ລາຍຈ່າຍດັດສົມ-ສິ່ງເສີມ 299,5 ຕື້ກີບ
4. ລາຍຈ່າຍເງິນແຮ ແລະ ບັງເອີນ 40,0 ຕື້ກີບ
5. ລາຍຈ່າຍເງິນສະສົມຂອງລັດຖະບານ 150,0 ຕື້ກີບ
6. ລາຍຈ່າຍໜີ້ສິນຕ່າງໆ 955,0 ຕື້ກີບ
   - ຈ່າຍຊຳລະໜີ້ສິນຕ່າງປະເທດ 680,0 ຕື້ກີບ
   - ຈ່າຍຊຳລະໜີ້ສິນພາຍໃນ 275,0 ຕື້ກີບ
7. ລາຍຈ່າຍການລົງທຶນຂອງລັດ 2.942,8 ຕື້ກີບ
   + ທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ 2.159,0 ຕື້ກີບ
   + ຈ່າຍລົງທຶນພາຍໃນ 760,0 ຕື້ກີບ
     - ຈ່າຍໜີ້ລົງທຶນ 300,0 ຕື້ກີບ
     - ຈ່າຍໂຄງການສືບຕໍ່ 200,0 ຕື້ກີບ
     - ຈ່າຍສົມທົບທຶນຕ່າງປະເທດ 160,0 ຕື້ກີບ
     - ຈ່າຍໂຄງການກໍ່ສ້າງໃໝ່ 100,0 ຕື້ກີບ
   + ຈ່າຍໂຄງການບູລະນະທາງຫຼວງແຫ່ງຊາດ 23,8 ຕື້ກີບ

**ມາດຕາ 5: ການລົງທຶນຂອງລັດ**

ໃນສົກປີ 2003-2004 ສະພາແຫ່ງຊາດ ໄດ້ຕົກລົງຮັບຮອງເອົາ ການລົງທຶນຂອງລັດ ຈຳນວນ 3.020 ໂຄງການ ລວມເປັນມູນຄ່າ 2.942,8 ຕື້ກີບ, ໃນນັ້ນ ທຶນພາຍໃນ 760 ຕື້ກີບ ແລະທຶນຕ່າງປະເທດ 2.159 ຕື້ກີບ.

ມອບໃຫ້ ຄະນະກຳມະການແຜນການ ແລະການຮ່ວມມື ແຈ້ງການລະອຽດ ໃຫ້ຂະແໜງການ ແລະທ້ອງຖິ່ນ ຈັດຕັ້ງປະຕິບັດ ບົນພື້ນຖານ ການປະຕິບັດຢ່າງເຂັ້ມງວດ ຕາມດຳລັດເລກທີ 58/ ນຍ ວ່າດ້ວຍການຄຸ້ມຄອງການລົງທຶນ ຂອງລັດ. ສ້າງລະບຽບການ ແລະມາດຕະການ, ກົນໄກ ເພື່ອຕິດຕາມ, ກວດກາແລະຄວບຄຸມການປະຕິບັດໃຫ້ເປັນຮູບປະທຳ.

ມາດຕາ 6: ມອບໃຫ້ຄະນະກຳມະການແຜນການ ແລະການຮ່ວມມື ຄົ້ນຄວ້າ, ວິໄຈ, ຕິດຕາມ, ພະຍາກອນສະພາບເສດຖະກິດມະຫາພາກ ແລະຊອກເຫັນມາດຕະການ, ວິທີການແກ້ໄຂທີ່ຄົບຊຸດ ແລະມີປະສິດທິພາບ ເພື່ອສະເໜີລັດຖະບານ ພິຈາລະນາ; ປັບປຸງກົນໄກການສ້າງ ແລະສັງລວມແຜນການ 5 ປີ ແລະແຜນການປະຈຳປີ ໃຫ້ແທດເໝາະກັບຕົວຈິງ; ການສ້າງ ແລະສັງລວມ ແຜນການປີ 2004-2005 ແລະແຜນການ 5 ປີ ຄັ້ງທີ VI, ຕ້ອງດຳເນີນໄປພ້ອມໆກັບ ການຈັດຕັ້ງປະຕິບັດ ແຜນການສົກປີ 2003-2004. ພ້ອມດຽວກັນນັ້ນ, ຕ້ອງສົມທົບກັບຂະແໜງການ ແລະທ້ອງຖິ່ນຕ່າງໆ ຄົ້ນຄວ້າສ້າງແຜນແມ່ບົດ ການພັດທະນາ ຕາມຂະແໜງການ, ການພັດທະນາ ເຂດແຄວ້ນ, ແຜນແມ່ບົດ ການລົງທຶນຂອງລັດ ແລະນະໂຍບາຍສົ່ງເສີມ ການນຳໃຊ້ບັນດາແຫຼ່ງທຶນອື່ນໆ ເຂົ້າໃນການພັດທະນາ ແລ້ວສະເໜີ ລັດຖະບານພິຈາລະນາ.

ສືບຕໍ່ປັບປຸງລະບົບຂໍ້ມູນສະຖິຕິ ເພື່ອຮັບປະກັນ ໃຫ້ແກ່ການຄົ້ນຄວ້າ, ການວາງແຜນ ແລະການພະຍາກອນເສດຖະກິດ ໃຫ້ແທດເໝາະ ກັບສະພາບຕົວຈິງ.

ມາດຕາ 7: ມອບໃຫ້ກະຊວງການເງິນ, ທະນາຄານແຫ່ງສປປ ລາວ ສົມທົບກັບ ຄະນະກຳມະການແຜນການແລະການຮ່ວມມື ຄົ້ນຄ້ວາສ້າງແຜນດຸນດ່ຽງເງິນຕາລວມ ແລະເງິນຕາຕ່າງປະເທດ ເພື່ອຄຸ້ມຄອງແລະດຸນດ່ຽງທົ່ວເສດຖະກິດແຫ່ງຊາດ ແນໃສ່ສ້າງສະຖຽນລະພາບ ຂອງເສດຖະກິດ ໃຫ້ມີຄວາມໝັ້ນທ່ຽງ. ຄົ້ນຄວ້າສ້າງແຜນແມ່ບົດເງິນກູ້ ແລະແຜນງານການສຳລະສະສາງ ໜີ້ສິນຕ່າງປະເທດໃຫ້ສຳເລັດ ແລ້ວນຳສະເໜີ ໃຫ້ລັດຖະບານພິຈາລະນາ.

ມາດຕາ 8: ມອບໃຫ້ກະຊວງການເງິນ ປັບປຸງລະບົບກົນໄກ, ວິທີການ ແລະລະບຽບການປະຕິບັດ ລາຍຮັບ-ລາຍຈ່າຍ ຕາມກົດໝາຍງົບປະມານ, ກົດໝາຍພາສີ, ກົດໝາຍອາກອນ, ກົດໝາຍທີ່ດິນ ແລະກົດໝາຍກ່ຽວຂ້ອງອື່ນໆ ທີ່ໄດ້ປະກາດໃຊ້ແລ້ວນັ້ນ ຢ່າງເຂັ້ມງວດ ໂດຍມີລະບຽບການແບ່ງຂັ້ນເກັບ ແລະຈ່າຍໃຫ້ຈະແຈ້ງລະຫວ່າງ ສູນກາງກັບທ້ອງຖິ່ນ.

ຫ້າມເດັດຂາດ ບໍ່ໃຫ້ຂະແໜງການໃດ, ທ້ອງຖິ່ນໃດຫຼຸດຜ່ອນ ຫຼື ຍົກເວັ້ນພາສີ-ອາກອນແລະຄ່າທຳນຽມທຸກປະເພດຕາມລຳພັງ. ທຸກການຍົກເວັ້ນ ຫຼື ຫຼຸດຜ່ອນພາສີ-ອາກອນແລະພັນທະອື່ນໆ ຕໍ່ງົບປະມານແຫ່ງລັດແມ່ນລັດຖະບານເປັນຜູ້ຕົກລົງ ໂດຍຜ່ານການຄົ້ນຄວ້າ ຂອງກະຊວງການເງິນ. ຖ້າຂະແໜງໃດ ຫຼື ທ້ອງຖິ່ນໃດ ຫາກຝ່າຝືນ ແມ່ນຈະຖືກພິຈາລະນາດ້ານວິໄນຢ່າງເຂັ້ມງວດ.

ມາດຕາ 9: ມອບໃຫ້ກະຊວງການເງິນ ສົມທົບກັບພາກສ່ວນກ່ຽວຂ້ອງ ສືບຕໍ່ປັບປຸງກົງຈັກການຈັດຕັ້ງຂອງ ດ່ານ, ເປັນຕົ້ນແມ່ນຂະແໜງພາສີ, ອາກອນ,ຊັບສິນທີ່ດິນ ໃຫ້ມີປະສິດທິພາບ ແລະບໍລິສຸດປອດໃສ ໂດຍມີການ ແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງ ກັບທ້ອງຖິ່ນ ຢ່າງຈະແຈ້ງ, ກຳນົດປະເພດດ່ານນຳເຂົ້າ-ອອກສິນຄ້າ ໃນແຕ່ລະ ທ້ອງຖິ່ນໃຫ້ເໝາະສົມ ກັບຄວາມສາມາດ ແລະເງື່ອນໄຂຄຸ້ມຄອງຕົວຈິງຂອງແຕ່ລະດ່ານ, ວາງລະບຽບການ ກ່ຽວກັບ ການກວດກາ-ກວດການການປະຕິບັດໜ້າທີ່ ຂອງພະນັກງານພາສີ, ອາກອນ, ຊັບສິນທີ່ດິນ ແລະພະນັກງານ ການເງິນທຸກຂັ້ນ ແລ້ວດຳເນີນການກວດກາ ຢ່າງເປັນປົກກະຕິ. ເຂັ້ມງວດໃນການລົງວິໄນຕໍ່ຜູ້ ລະເມີດ ລະບຽບກົດໝາຍ ແລະຍ້ອງຍໍຜູ້ທີ່ມີຜົນງານ ຢ່າງເໝາະສົມແລະທັນການ.

ເພື່ອເຮັດໃຫ້ ການຈັດເກັບລາຍຮັບ ມີປະສິດທິຜົນ ແລະສາມາດກວດສອບໄດ້ ທັງຢູ່ສູນກາງ, ແຂວງ, ເມືອງ ແລະບ້ານ ຢ່າງມີປະສິດທິພາບ ໃຫ້ຂະແໜງພາສີ-ອາກອນທຸກຂັ້ນ ປັບປຸງລະບົບເຄື່ອງມືຮັບໃຊ້ ການເຄື່ອນໄຫວ ວຽກງານພາສີ-ອາກອນໃຫ້ທັນສະໄໝ, ຈັດຕັ້ງເກັບກຳຂໍ້ມູນສະຖິຕິແຫຼ່ງລາຍຮັບພາສີ-ອາກອນ ຢ່າງເປັນລະບົບຄົບ ຊຸດ; ວາງມາດຕະການ ທີ່ມີປະສິດທິພາບ, ສະກັດກັ້ນ ແລະປາບປາມການລັກລອບໜີພາສີ, ການຄ້າເຖື່ອນ ແລະ ການຄ້າສິ່ງຜິດກົດໝາຍອື່ນໆ ໃນທຸກຮູບແບບ.

ມາດຕາ 10: ມອບໃຫ້ກະຊວງການເງິນ ແລະແຂວງ ສົມທົບກັນ ຄົ້ນຄວ້າກົນໄກການຈັດຕັ້ງ ແລະວິທີການ ແບ່ງຂັ້ນເກັບລາຍຮັບ-ລາຍຈ່າຍ ໂດຍປະຕິບັດຕາມດຳລັດ ເລກທີ 192/ນຍ ຢ່າງເຂັ້ມງວດ, ກຳນົດລະອຽດໜ້າທີ່, ຄວາມຮັບຜິດຊອບ ການເກັບລາຍຮັບ ແລະລາຍຈ່າຍ ລະຫວ່າງສູນກາງ ແລະທ້ອງຖິ່ນໃຫ້ຈະແຈ້ງ. ໂດຍສະເພາະ ແມ່ນໃຫ້ລວມສູນລາຍຮັບ ຈາກພາສີ, ອາກອນໂຕເລກທຸລະກິດ, ອາກອນຊົມໃຊ້ສິນຄ້ານຳເຂົ້າ ທຸກປະເພດ ບັນຊີລາຍຮັບທີ່ຄັງເງິນສູນກາງ ເປີດໄວ້ຢູ່ສາຂາທະນາຄານ ປະຈຳແຕ່ລະທ້ອງຖິ່ນຢ່າງເຂັ້ມງວດ.

- ລາຍຮັບເກີນແຜນ ທີ່ລັດຖະບານມອບ ໃຫ້ປະຕິບັດຖືກຕ້ອງ ຕາມລະບຽບກົດໝາຍ, ແມ່ນຈະອະນຸມັດໃຫ້ ທ້ອງຖິ່ນນຳໃຊ້ 100%, ສ່ວນທ້ອງຖິ່ນ ທີ່ມີລາຍຮັບເກີນດຸນນັ້ນ ຕ້ອງປະຕິບັດພັນທະ ຕໍ່ສູນກາງຄົບຖ້ວນຖືກຕ້ອງ ຕາມແຜນການ, ລະບຽບກົດໝາຍ ແລະທັນເວລາທີ່ກຳນົດໄວ້.

ພ້ອມດຽວກັນນັ້ນ, ມອບໃຫ້ກະຊວງການເງິນ ສົມທົບກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າ ເພື່ອຈັດຕັ້ງປະຕິບັດ ອາກອນມູນຄ່າເພີ່ມ ໃນຕໍ່ໜ້າ, ປັບປຸງກົນໄກ ການຈຳໜ່າຍພັນທະບັດຄັງເງິນ ໃຫ້ລະອຽດ ຮັບປະກັນໃຫ້ມີ ປະສິດທິພາບ ແລະສາມາດກວດສອບໄດ້. ຫ້າມບໍ່ໃຫ້ເອົາລາຍຮັບ ຈາກການຂາຍພັນທະບັດ ໄປໃຊ້ຈ່າຍ ບໍລິຫານ ຢ່າງເດັດຂາດ, ຕ້ອງນຳໃຊ້ຕາມເປົ້າໝາຍລົງທຶນ ທີ່ມີປະສິດທິຜົນ. ປັບປຸງລະບົບການຈັດຕັ້ງ ການຕິດສະແຕມ ສິນຄ້າ ແລະອື່ນໆໃຫ້ໄວຂຶ້ນ ເພື່ອສ້າງລາຍຮັບ ເພີ່ມເຕີມເຂົ້າງົບປະມານ. ພ້ອມດຽວກັນ ໃຫ້ສົມທົບກັບກວດກາ ແລະທວງເອົາໜີ້ສິນ ຂອງບັນດາຫົວໜ່ວຍທຸລະກິດຕ່າງໆ ທີ່ມີພັນທະ ຕໍ່ງົບປະມານ ຂອງລັດໃຫ້ໝົດ.

ມາດຕາ 11: ມອບໃຫ້ກະຊວງການເງິນ ຄົ້ນຄວ້າກົນໄກ ແລະລະບຽບການ ຕິດຕາມກວດກາການປະຕິບັດ ລາຍຈ່າຍງົບປະມານ ຂອງບັນດາຂະແໜງການສູນກາງ ແລະທ້ອງຖິ່ນ ຢ່າງເຄັ່ງຄັດກວ່າເກົ່າ ເພື່ອຮັບປະກັນໃຫ້ ການປະຕິບັດລາຍຈ່າຍ ໄປຕາມແຜນການທີ່ໄດ້ອະນຸມັດ. ພ້ອມກັນນັ້ນ, ຕ້ອງກວດກາຄວາມຖືກຕ້ອງ ແລະໃຫ້ສອດ ຄ່ອງໃນການຈັດຕັ້ງ ແລະນຳໃຊ້ທຶນ ຂອງບັນດາກອງທຶນຕ່າງໆ ທີ່ຂະແໜງການສູນກາງ ແລະທ້ອງຖິ່ນສ້າງຕັ້ງຂຶ້ນ

ເພື່ອເຮັດໃຫ້ລາຍຮັບ-ລາຍຈ່າຍ ລວມສູນ ຜ່ານງົບປະມານແຫ່ງລັດ ຕາມກົດໝາຍກຳນົດໄວ້ ທັງເພື່ອເສີມຂະຫຍາຍຄຸນປະໂຫຍດ ຂອງແຫຼ່ງທຶນຕ່າງໆໄດ້ເປັນຢ່າງດີ.

ມາດຕາ 12: ປັບປຸງລະບຽບຫລັກການ ໃນການແບ່ງຂັ້ນຄຸ້ມຄອງລາຍຮັບ-ລາຍຈ່າຍ ງົບປະມານໃຫ້ຈະແຈ້ງ ແລະຮັດກຸມ, ຕາມລະບຽບກົດໝາຍ ນັບທັງເປັນເງິນຕາຕ່າງປະເທດ, ປະຕິບັດຢ່າງເຄັ່ງຄັດ ຄຳສັ່ງເລກທີ 15/ນຍ ວ່າດ້ວຍການຄຸ້ມຄອງປ່າໄມ້ ແລະທຸລະກິດໄມ້, ສ້າງແຜນການດຸ່ນດ່ຽງເງິນຕາຕ່າງປະເທດ, ສ້າງລະບຽບການ ແລະກົນໄກການສຳລະສະສາງ, ການມອບພັນທະພາສີ, ອາກອນ ຕໍ່ງົບປະມານຜ່ານລະບົບທະນາຄານ. ສ້າງລະບຽບການທີ່ເຂັ້ມງວດໃນການຈັດຕັ້ງປະຕິບັດຮ່ວງລາຍຮັບ-ລາຍຈ່າຍຕ່າງໆ ຂອງງົບປະມານແຕ່ຂັ້ນແຂວງ, ແຂວງລົງຫາຂັ້ນເມືອງ ແລະບ້ານ.

ມາດຕາ 13: ຫ້າມເດັດຂາດບໍ່ໃຫ້ຂະແໜງການໃດ, ທ້ອງຖິ່ນໃດ ສ້າງໜີ້ສິນເພີ່ມໃຫ້ງົບປະມານແຫ່ງລັດ, ເປັນຕົ້ນ ແມ່ນໃຫ້ຢຸດຕິ ການໃຫ້ຫົວໜ່ວຍທຸລະກິດ ປະຕິບັດໂຄງການກ່ອນ ແລ້ວຈຶ່ງຂຶ້ນແຜນງົບປະມານຊຳລະຕາມພາຍຫລັງ. ທຸກອົງການຈັດຕັ້ງ ທີ່ໄດ້ຮັບການເບີກຈ່າຍ ຈາກງົບປະມານຂອງລັດ ຕ້ອງປະຕິບັດຕາມຮ່ວງລາຍຈ່າຍຂອງແຜນງົບປະມານ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວຢ່າງເຂັ້ມງວດ.

ມາດຕາ 14: ມອບໃຫ້ກະຊວງການເງິນ ສົມທົບກັບກົມການປົກຄອງ ຄົ້ນຄ້ວາຈັດຕັ້ງປະຕິບັດການຕົກລົງຂອງລັດຖະບານ ວ່າດ້ວຍການເພີ່ມເງິນເດືອນ ແລະເງິນນະໂຍບາຍໃໝ່ ໃຫ້ແກ່ພະນັກງານ-ລັດຖະກອນ ໂດຍໃຫ້ເລີ່ມປະຕິບັດນັບແຕ່ງວດທີ 3 ສົກປີ 2003-2004 ເປັນຕົ້ນໄປ. ການປັບປຸງເງິນເດືອນໃໝ່ຕ້ອງໄປພ້ອມໆກັບການຍົກຄຸນນະພາບວຽກງານຂຶ້ນ, ການຫລຸດຜ່ອນຈຳນວນພົນຂອງກົງຈັກ ແລະແກ້ໄຂສະພາບຄ້າງຈ່າຍເງິນເດືອນໃນໄລຍະຜ່ານມາ.

ມາດຕາ 15: ມອບໃຫ້ທະນາຄານແຫ່ງ ສປປ ລາວ ສືບຕໍ່ປະຕິບັດນະໂຍບາຍ ເງິນຕາແບບຄ່ອງຕົວ, ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນທີ່ຄ່ອງຕົວ ແລະນະໂຍບາຍອັດຕາດອກເບ້ຍບວກ, ສົ່ງເສີມການນຳໃຊ້ເງິນກີບໃນການຊຳລະສະສາງພາຍໃນໃຫ້ຫລາຍຂຶ້ນ. ໃຫ້ອອກລະບຽບການທີ່ສອດຄ່ອງ ເພື່ອປະຕິບັດການຊຳລະເປັນເງິນຕາຕ່າງປະເທດ ຜ່ານລະບົບທະນາຄານ ແລະຄຸ້ມຄອງກະແສການໄຫລເຂົ້າ- ອອກຂອງເງິນຕາຕ່າງປະເທດ ຕາມລະບຽບການວາງໄວ້.

ມາດຕາ 16: ນຳໃຊ້ມາດຕະການ ແລະເຄື່ອງມືການເງິນທີ່ຄ່ອງຕົວ ເພື່ອສ້າງເງື່ອນໄຂໃຫ້ຄັງສຳຮອງ ເງິນຕາຕ່າງປະເທດເພີ່ມຂຶ້ນ, ມອບໃຫ້ທະນາຄານແຫ່ງ ສປປ ລາວ ຊີ້ນຳທະນາຄານທຸລະກິດ ເພື່ອປັບປຸງຄວາມສາມາດໃນການບໍລິການ ຂອງທະນາຄານໃຫ້ມີປະສິດທິພາບ ແລະໄດ້ມາດຕະຖານສາກົນເທື່ອລະກ້າວ ເພື່ອສ້າງຄວາມເຊື່ອຖືແກ່ລູກຄ້າ.

ມາດຕາ 17: ໃຫ້ທະນາຄານແຫ່ງ ສປປ ລາວ ຄົ້ນຄວ້າໂຄງການສ້າງຄວາມເຂັ້ມແຂງ ແລະພັດທະນາລະບົບສະຖາບັນການເງິນຢູ່ ສປປ ລາວ ເພື່ອກະຕຸ້ນການພັດທະນາເສດຖະກິດ, ສ້າງຄວາມເຊື່ອຖືຕໍ່ລູກຄ້າ ທັງພາຍໃນແລະຕ່າງປະເທດ; ພ້ອມດຽວກັນນັ້ນ ກໍໃຫ້ທະນາຄານ ແຫ່ງ ສປປ ລາວ ເປັນເຈົ້າພາບຈັດສຳມະນາຫຼາຍຫົວຂໍ້ ເພື່ອກະກຽມເງື່ອນໄຂກ້າວໄປສູ່ ການພັດທະນາ ຕະຫລາດເງິນທຶນ ໃນຕໍ່ຫນ້າ ແລ້ວສະເຫນີລັດຖະບານພິຈາລະນາ.

ມາດຕາ 18: ທຸກໂຄງການລົງທຶນທີ່ນຳໃຊ້ແຫລ່ງທຶນຂອງລັດ, ນັບທັງການລົງທຶນຂອງລັດ ໃຫ້ແກ່ລັດວິສາຫະກິດ, ການສົມທົບທຶນຂອງລັດກັບພາກເອກະຊົນ; ການປະກອບຫຸ້ນຂອງລັດໃນການສ້າງຕັ້ງວິສາຫະກິດປະສົມກັບພາຍໃນ ຫລື ຕ່າງປະເທດ ລ້ວນແຕ່ຕ້ອງໄດ້ສ່ອງແສງໃຫ້ເຫັນຜ່ານແຜນການລົງທຶນຂອງລັດ ແລະມີການປະເມີນຜົນ ກ່ອນການອະນຸຍາດໃຫ້ລົງທຶນ; ບັນດາຂະແໜງການສູນກາງ ແລະທ້ອງຖິ່ນ ຕ້ອງເຂັ້ມງວດປະຕິບັດລະບຽບການ ຕິດຕາມປະເມີນຜົນໂຄງການລົງທຶນ ຂອງລັດ ຕາມລະບຽບການແບ່ງຂັ້ນຄຸ້ມຄອງທີ່ມີແລ້ວ.

ມາດຕາ 19:ມອບໃຫ້ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າໄວ ຮ່າງດຳລັດ ກ່ຽວກັບກຳນົດໝາຍ, ມາດຖານລາຄາຫົວໜ່ວຍການກໍ່ສ້າງ, ສ້ອມແປງຕ່າງໆ ນັບທັງກຳນົດລາຄາກາງ ໃນການຄິດໄລ່ການສິ້ນເປືອງ ເພື່ອເປັນພື້ນຖານບັງຄັບໃຊ້ໃນການວາງແຜນ, ຄຸ້ມຄອງ, ກວດກາ ແລະປະເມີນຜົນໂຄງການ ແລະກິດຈະການລົງທຶນຕ່າງໆຢ່າງເປັນລະບົບ. ພ້ອມດຽວກັນນັ້ນ, ກໍ່ສົມທົບກັບກະຊວງ, ຂະແໜງການຕ່າງໆ ອອກລະບຽບການທີ່ໃຫ້ບູລິມະສິດ ແກ່ບໍລິສັດພາຍໃນຂອງລາວ (ທີ່ນຳໃຊ້ວັດສະດຸກໍ່ສ້າງພາຍໃນເປັນຕົ້ນຕໍ ແລະນຳໃຊ້ແຮງງານລາວ) ຮັບເໝົາໂຄງການກໍ່ສ້າງທີ່ໃຊ້ງົບປະມານຂອງລັດ ເພື່ອເສີມຂະຫຍາຍກຳລັງແຮງ ຂອງເສດຖະກິດພາຍໃນ ແລະຮັກສາຄ່າເງິນກີບໃຫ້ມີຄວາມຫມັ້ນຄົງ.

ມາດຕາ 20: ມອບໃຫ້ຄະນະກຳມະການແຜນການ ແລະການຮ່ວມມື, ກະຊວງກະສິກຳ-ປ່າໄມ້, ກະຊວງຄົມມະນາຄົມຂົນສົ່ງ, ໄປສະນີ ແລະ ກໍ່ສ້າງ, ກະຊວງອຸດສາຫະກຳ ແລະຫັດຖະກຳ ແຕ່ງຕັ້ງຫນ່ວຍງານວິຊາການລົງສົມທົບກັບທ້ອງຖິ່ນ ເພື່ອກວດກາດ້ານເຕັກນິກ, ການອອກແບບ ແລ້ວປະເມີນຄືນສຳລັບບັນດາໂຄງການສືບຕໍ່ທີ່ມີມູນຄ່າສູງກວ່າ 50 ຕື້ກີບ ທີ່ທ້ອງຖິ່ນເປັນຜູ້ຄຸ້ມຄອງນັ້ນ ແລ້ວລາຍງານໃຫ້ລັດຖະບານ ພິຈາລະນາ ວ່າຈະສືບຕໍ່ ຫຼືໂຈະການກໍ່ສ້າງໂຄງການດັ່ງກ່າວ.

ມາດຕາ 21: ເພື່ອປະຕິບັດຍຸດທະສາດ ຫັນເປັນອຸດສາຫະກຳ ແລະເປັນທັນສະໄໝໃຫ້ເປັນຮູບປະທຳເທື່ອລະກ້າວ, ໃຫ້ກະຊວງກະສິກຳ, ອຸດສາຫະກຳ, ການຄ້າແລະແຂວງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄວ້າສ້າງໂຄງການບູລິມະສິດຜະລິດສິນຄ້າ ຫລື ການບໍລິການທີ່ເປັນປາຍແຫລມ, ໂຄງການປັບປຸງຍົກລະດັບເຕັກນິກ-ເຕັກໂນໂລຊີ ເພື່ອສະເຫນີລັດຖະບານ ພິຈາລະນາ ເອົາເຂົ້າແຜນລົງທຶນໃນປີຕໍ່ໄປ.

ມາດຕາ 22:ໃຫ້ຄະນະຊີ້ນຳການຜະລິດສິນຄ້າຂັ້ນສູນກາງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງຄົ້ນຄ້ວາປັບປຸງກົນໄກການຕິດຕາມ, ຊຸກຍູ້ການປະຕິບັດໂຄງການຜະລິດສິນຄ້າ ທີ່ກອງທຶນສົ່ງເສີມຜະລິດສິນຄ້າຂອງລັດຖະ

ບານໄດ້ອະນຸມັດໄປແລ້ວນັ້ນ ເພື່ອມອບໃຫ້ທ້ອງຖິ່ນຄຸ້ມຄອງ ແລະທ້ອງຖິ່ນຕ້ອງລາຍງານ ໃຫ້ລັດຖະບານຊາບເປັນປົກກະຕິ.

ມາດຕາ 23: ມອບໃຫ້ກອງເລຂາຄະນະຊີ້ນຳ ການຜະລິດສິນຄ້າ ສົມທົບກັບກະຊວງການເງິນ, ທະນາຄານ ແລະພາກສ່ວນກ່ຽວຂ້ອງຈັດຕັ້ງປະຕິບັດ ການປ່ອຍສິນເຊື່ອບົວງສົ່ງເສີມການຜະລິດສິນຄ້າ ໂດຍຜ່ານລະບົບທະນາຄານ ຕາມນະໂຍບາຍ ຖົມຊຸມດອກເບັ້ຍ, ໃຫ້ກຳນົດລະບຽບ ແລະກົນໄກທີ່ຄ່ອງຕົວ ເພື່ອປ່ອຍສິນເຊື່ອໃຫ້ຖືກເປົ້າໝາຍສົ່ງເສີມຢ່າງແທ້ຈິງ ແລະເຮັດໃຫ້ນະໂຍບາຍ " ໜຶ່ງເມືອງ ໜຶ່ງຜະລິດຕະພັນ "ໄດ້ຮັບການຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ.

ມາດຕາ 24: ມອບໃຫ້ຄະນະປັບປຸງທຸລະກິດ, ກະຊວງການເງິນແລະທະນາຄານ ສືບຕໍ່ປັບປຸງການບໍລິຫານຄຸ້ມຄອງ ການແກ້ໄຂໜີ້ສິນ ຂອງລັດວິສາຫະກິດ ໃຫ້ສຳເລັດເປັນກ້າວໆ ເພື່ອໃຫ້ເຂົາເຈົ້າເຄື່ອນໄຫວມີປະສິດທິພາບກວ່າເກົ່າ. ພ້ອມດຽວກັນນັ້ນ, ກໍ່ເອົາໃຈໃສ່ປັບປຸງລະບົບບັນຊີຂອງລັດວິສາຫະກິດ ໃຫ້ເປັນລະບົບ ແລະຮັບປະກັນຄວາມໂປ່ງໃສ.

ຫ້ອງການປັບປຸງທຸລະກິດ ຂອງສຳນັກງານນາຍົກລັດຖະມົນຕີ ຕ້ອງສືບຕໍ່ປະຕິບັດແຜນປັບປຸງວິສາຫະກິດຢ່າງຕັ້ງໜ້າແລະມີຜົນສັກສິດ ໃນການຈັດຕັ້ງປະຕິບັດແຜນດຳເນີນງານຂອງຕົນ.

ມາດຕາ 25: ມອບໃຫ້ຄະນະກຳມະການພະລັງງານແຫ່ງຊາດ ຄົ້ນຄວ້າຊອກຫາວິທີທາງ ເພື່ອແກ້ໄຂບັນຫາໂຄງການນ້ຳເທີນ 2 ໃຫ້ສາມາດດຳເນີນໄປຕາມແຜນ, ສືບຕໍ່ພັດທະນາໂຄງການໄຟຟ້າພະລັງນ້ຳ, ພະລັງງານຖ່ານຫີນ ແລະພະລັງງານດ້ວຍແສງຕາເວັນ ແລະພັດທະນາພະລັງງານທີ່ມີແລ້ວ. ພ້ອມດຽວກັນນັ້ນ, ໃຫ້ຄົ້ນຄວ້ານະໂຍບາຍ ນຳໃຊ້ພະລັງງານ ໃຫ້ມີຄຸນປະໂຫຍດສູງສຸດ ແລະນະໂຍບາຍປະຢັດ.

ມາດຕາ 26: ມອບໃຫ້ກົມການປົກຄອງ ຄົ້ນຄວ້າປັບປຸງນະໂຍບາຍ ແລະມາດຕະການຕ່າງໆ ໃນການຜັນຂະຫຍາຍກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນ ເພື່ອສະເໜີໃຫ້ຂັ້ນເທິງກຳນົດສິດ, ໜ້າທີ່,ຄວາມຮັບຜິດຊອບຂອງສູນກາງ ແລະທ້ອງຖິ່ນ ໃຫ້ສອດຄ່ອງ, ຈະແຈ້ງ ໃນການຄຸ້ມຄອງເສດຖະກິດ-ສັງຄົມ.

ມາດຕາ 27: ຕ້ອງເພີ່ມທະວີ ການຄຸ້ມຄອງເສດຖະກິດມະຫາພາກ ໃຫ້ມີຄວາມສັກສິດ ໂດຍມອບໃຫ້ຄະນະກຳມະການແຜນການແລະການຮ່ວມມື, ກະຊວງການເງິນ, ທະນາຄານ ສົມທົບກັນຄົ້ນຄວ້າ ແລະປັບປຸງບັນດາລະບຽບການ, ຂໍ້ກຳນົດ ກົດໝາຍຕ່າງໆ ເພື່ອເຮັດໃຫ້ກົນໄກການຄຸ້ມຄອງ ເສດຖະກິດມະຫາພາກ ແລະການປະສານງານຕ່າງໆຄ່ອງຕົວກວ່າເກົ່າ.

ມາດຕາ 28: ໃຫ້ບັນດາກະຊວງ, ແຂວງ ແລະເມືອງ ອີງໃສ່ພາລະບົດບາດຂອງຕົນ ຄົ້ນຄວ້າສ້າງລະບຽບການ, ມາດຕະການລະອຽດທີ່ສອດຄ່ອງ ເພື່ອປະຕິບັດນະໂຍບາຍ ແລະກົດໝາຍທີ່ມີແລ້ວ ແລະນະໂຍບາຍເພີ່ມເຕີມ ທີ່ກຳນົດອອກໃນແຜນການປີ 2003-2004 ເພື່ອສ້າງເງື່ອນໄຂລະດົມ ແລະສົ່ງເສີມທຸກພາກສ່ວນເສດຖະກິດ

ໃຫ້ເຂົ້າຮ່ວມໃນການລົງທຶນຜະລິດສິນຄ້າ ແລະບໍລິການ ໃນຂະແໜງການ ແລະທ້ອງຖິ່ນຂອງຕົນ ທີ່ມີເງື່ອນໄຂອຳນວຍຄວາມສະດວກ.

ມາດຕາ 29: ມອບໃຫ້ກະຊວງກະສິກຳ-ປ່າໄມ້ ແລະກະຊວງການຄ້າ ຄົ້ນຄວ້າກົນໄກຄວບຄຸມທີ່ຮັດກຸມ ແລະເຂັ້ມງວດ ຕໍ່ການປະຕິບັດຄຳສັ່ງນາຍົກລັດຖະມົນຕີ ເລກທີ 15/ນຍ, ກ່ຽວກັບການຫ້າມສົ່ງໄມ້ທ່ອນອອກສູ່ຕ່າງປະເທດ ແລະສະເໜີແຜນໄລຍະສັ້ນແລະໄລຍະຍາວ ທີ່ມີໂຄງການລະອຽດ ໃນການສົ່ງເສີມການປຸງແຕ່ງໄມ້ສຳເລັດຮູບ ທີ່ມີມູນຄ່າເພີ່ມສູງເພື່ອສົ່ງອອກ ໂດຍຕິດພັນກັບການປູກປ່າໄລຍະຍາວ, ສ້າງແຜນແລະມາດຕະການເພື່ອປິດປ່າທຳມະຊາດ ຫັນມາພັດທະນາປ່າເສດຖະກິດເປັນກ້າວໆໄປ ເພື່ອຄວາມຍືນຍົງຂອງປ່າແຫຼ່ງນ້ຳ ແລະຊີວະນາໆພັນຂອງຊາດ.

ມາດຕາ 30: ມອບໃຫ້ກະຊວງອຸດສາຫະກຳ ແລະຫັດຖະກຳ, ກະຊວງການຄ້າ, ຄະນະກຳມະການແຜນການ ແລະການຮ່ວມມື ແລະກະຊວງອື່ນໆ ທີ່ກ່ຽວຂ້ອງສົມທົບກັບຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ໃຫ້ສຳເລັດໂດຍໄວ ເພື່ອພັດທະນາແລະຄຸ້ມຄອງເຂດເສດຖະກິດພິເສດ, ເຂດອຸດສາຫະກຳ, ເຂດການຄ້າເສລີ ແລະ ການບໍລິການຜ່ານ ທີ່ລັດຖະບານໄດ້ຕົກລົງແລ້ວນັ້ນ ແນໃສ່ສົ່ງເສີມການຜະລິດ ແລະການບໍລິການໃຫ້ເພີ່ມຂຶ້ນ.

ມາດຕາ 31: ບັນດາອົງການຈັດຕັ້ງຂອງລັດ ຂັ້ນຕ່າງໆ ຕ້ອງເຂັ້ມງວດປະຕິບັດນະໂຍບາຍປະຢັດມັດທະຍັດໃນການໃຊ້ຈ່າຍງົບປະມານ, ເປັນຕົ້ນແມ່ນ ການໃຊ້ຈ່າຍງົບປະມານບໍລິຫານ, ງົບປະມານລົງທຶນໃຫ້ມີປະສິດທິຜົນ ແລະຊົມໃຊ້ຜະລິດຕະພັນພາຍໃນປະເທດ ເພື່ອມີທຶນຮອນສຸມໃສ່ການຜະລິດເປັນສິນຄ້າ, ກໍ່ສ້າງຮາກຖານການເມືອງ ແລະພັດທະນາຊົນນະບົດ ແນໃສ່ແກ້ໄຂຄວາມທຸກຍາກລົງເທື່ອລະກ້າວ, ຮັບປະກັນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວຽກງານການຕ່າງປະເທດ ແລະວັດທະນະທຳ-ສັງຄົມ ໃຫ້ໄດ້ຮັບການພັດທະນາ ດີຂຶ້ນກວ່າເກົ່າ.

ມາດຕາ 32: ມອບໃຫ້ກະຊວງການຄ້າສືບຕໍ່ຄົ້ນຄວ້າ ວາງນະໂຍບາຍອອກ ແລະບັນດາມາດຕະການຕ່າງໆຕິດຕາມ, ກັດສົມ ແລະແຊກແຊງຄຸ້ມຄອງ ລາຄາສິນຄ້າ, ລະບຽບການແບ່ງຂັ້ນ ເພື່ອຄຸ້ມຄອງ ການນຳເຂົ້າສິນຄ້າຍຸດທະສາດ ກັບບັນດາແຂວງ, ປັບປຸງແລະສ້າງກົນໄກທີ່ສອດຄ່ອງ ເພື່ອຊຸກຍູ້ສົ່ງເສີມການຜະລິດສິນຄ້າທົດແທນການນຳເຂົ້າ ແລະເປັນຂາອອກ. ເປີດກວ້າງຕະຫລາດສົ່ງອອກສິນຄ້າ, ເພີ່ມການຈັດງານວາງສະແດງສິນຄ້າ, ຕະຫຼາດນັດຂອງປະຊາຊົນ, ການສົ່ງເສີມການຄ້າຊາຍແດນ ແລະການຄ້າຜ່ານແດນໃຫ້ແຂງແຮງກວ່າເກົ່າ.

ມາດຕາ 33: ມອບໃຫ້ກະຊວງອຸດສາຫະກຳ ແລະຫັດຖະກຳ ຄົ້ນຄວ້າ ປັບປຸງນະໂຍບາຍ ໃຫ້ສອດຄ່ອງໃນການຈັດຕັ້ງປະຕິບັດ ການຫັນເປັນອຸດສາຫະກຳ ແລະທັນສະໄໝ, ຄຸ້ມຄອງການຂຸດຄົ້ນແຮ່ຄຳ, ທອງແດງ, ແຮ່ແກ້ວປະເສີດ ແລະແຮ່ອື່ນໆ ຕາມກົດໝາຍບໍ່ແຮ່ທີ່ວາງອອກ. ມອບໃຫ້ກະຊວງອຸດສາຫະກຳສຳເລັດການປັບປຸງຮ່າງດຳລັດ ວ່າດ້ວຍການສົ່ງເສີມ ທຸລະກິດຂະໜາດນ້ອຍ ແລະຂະໜາດກາງ ເພື່ອສະເໜີຜ່ານລັດຖະບານ ອະນຸມັດ ໃນຕົ້ນປີ 2004.

ມາດຕາ 34: ໃຫ້ກະຊວງແຮງງານ ແລະສະຫວັດດີການສັງຄົມ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ຮ່າງກົດໝາຍ ວ່າດ້ວຍລະການປະກັນສັງຄົມ ທີ່ກວມເອົາທຸກພາກສ່ວນເສດຖະກິດ. ຄົ້ນຄວ້ານະໂຍບາຍ ເງິນເດືອນ ສຳລັບຂົງເຂດວິສາຫະກິດ ບັນທັງວິສາຫະກິດການລົງທຶນ ຂອງຕ່າງປະເທດ.

ມາດຕາ 35: ໃຫ້ກົມການປົກຄອງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍປຸກລະດົມ ແລະ ນຳໃຊ້ປັນຍາຄວາມຮູ້, ບົດຮຽນທີ່ອຸດົມຮັ່ງມີຂອງຄົນລາວຈາກທຸກພາກສ່ວນ (ບັນທັງຢູ່ພາຍໃນ ແລະຄົນລາວ ທີ່ຮັກຊາດ ຢູ່ຕ່າງປະເທດ) ເພື່ອປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຄົ້ນຄວ້າ, ສິດສອນ, ໃຫ້ຄຳປຶກສາ, ຝຶກອົບຮົມ ໃນສະຖາບັນສຶກສາ, ເວທີສຳມະນາ ແລະຮູບການອື່ນ ເພື່ອສ້າງກຳລັງແຮງສັງລວມ ໃນການພັດທະນາປະເທດຊາດ.

ມາດຕາ 36: ມອບໃຫ້ກະຊວງສຶກສາທິການ, ກະຊວງສາທາລະນະສຸກ, ກະຊວງແຮງງານ ແລະສະຫວັດດີການສັງຄົມ, ກະຊວງຖະແຫລງຂ່າວ ແລະວັດທະນະທຳ ສົມທົບກັບຄົ້ນຄວ້າ ສ້າງແຜນແມ່ບົດ ແລະໂຄງການພັດທະນາຊັບພະຍາກອນມະນຸດ: ໃຫ້ກະຊວງສຶກສາທິການ ຄົ້ນຄວ້າສ້າງໂຄງການ ບຳລຸງຄູ ແລະພັດທະນາຫລັກສູດການສຶກສາຂັ້ນພື້ນຖານ ໃຫ້ມີຄຸນນະພາບ ແລະໄດ້ມາດຖານ, ໂຄງການຂະຫຍາຍ ແລະປັບປຸງຄຸນນະພາບວຽກງານອາຊີວະສຶກສາ, ການສຶກສາຊັ້ນສູງ ແລະມະຫາວິທະຍາໄລແຫ່ງຊາດ ໃຫ້ໄດ້ມາດຖານ, ປັບປຸງນະໂຍບາຍການສຶກສາພາກເອກກະຊົນ ເພື່ອຂະຫຍາຍໂຮງຮຽນຊັ້ນຕ່າງໆ ໃນແຕ່ລະທ້ອງຖິ່ນ,ເປັນຕົ້ນ: ໂຮງຮຽນສາມັນ, ໂຮງຮຽນວິຊາຊີບ, ວິທະຍາໄລ ແລະອື່ນໆ. ຮີບຮ້ອນຄົ້ນຄວ້ານະໂຍບາຍ ຍົກເວັ້ນພາສີ, ອາກອນທີ່ເໝາະສົມ ໃນຂົງເຂດນີ້ ເພື່ອຈະ ໄດ້ຕົກລົງ ແລະປະກາດໃຊ້ ແນ່ໃສ່ລະດົມກຳລັງແຮງທົ່ວສັງຄົມ ເຂົ້າໃນການຂະຫຍາຍການສຶກສາ.

ມາດຕາ 37: ມອບໃຫ້ກະຊວງສາທາລະນະສຸກ ຄົ້ນຄວ້າສ້າງເປັນໂຄງການ ແລະວາງນະໂຍບາຍ ທີ່ຈຳເປັນຕ່າງໆ ເພື່ອແກ້ໄຂບັນດາພະຍາດ ແລະໂລກລະບາດ ທີ່ຈຳເປັນກ່ອນໝູ່ຢູ່ປະເທດເຮົາ ສືບຕໍ່ຂະຫຍາຍຕາໜ່າງການບໍລິການສຸຂະພາບ, ການປິ່ນປົວປະເພດເສັຽຄ່າ ແລະບໍ່ເສັຽຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ ໂດຍແບ່ງເປັນປະເພດກຸ່ມຄົນ ທີ່ຄວນປະຕິບັດນະໂຍບາຍ ແລະສຸຂະອະນາໄມເພີ່ມສູງຂຶ້ນ.

ມາດຕາ 38: ມອບໃຫ້ກະຊວງແຮງງານ ຄົ້ນຄວ້າສ້າງແຜນການ ແລະໂຄງການພັດທະນາສີມືແຮງງານ ໃຫ້ມີຄຸນນະພາບ, ຄົ້ນຄວ້າແຜນແກ້ໄຂແຮງງານຕ່າງດ້າວ ທີ່ເຂົ້າມາບໍ່ຖືກກົດໝາຍ ແລະແກ້ໄຂແຮງງານລາວ ທີ່ໄປປະເທດໃກ້ຄຽງໃຫ້ຖືກຕ້ອງ (ໄລຍະຍາວສ້າງຍຸດທະສາດ ຮ່ວມມືເສດຖະກິດ ສ້າງວຽກເຮັດງານທຳ ກັບປະເທດເພື່ອນບ້ານ). ເອົາໃຈໃສ່ເພື່ອຄົ້ນຄວ້າ ປັບປຸງນະໂຍບາຍ 194/ນຍ ປະຕິບັດນະໂຍບາຍ ຕໍ່ຜູ້ທີ່ມີຜົນງານຕໍ່ການປະຕິວັດ, ຜູ້ອອກກິນເບັ້ຽບຳນານໃຫ້ດີ ແລະທົ່ວເຖິງ .

ມາດຕາ 39: ມອບໃຫ້ກະຊວງຖະແຫລງຂ່າວ ແລະວັດທະນະທຳ ຄົ້ນຄວ້າສ້າງໂຄງການ ເພື່ອປັບປຸງລະບົບສື່ມວນຊົນໃຫ້ມີຄຸນນະພາບ, ຊັດເຈນ, ທັນເວລາ, ເປັນສື່ໃນການໃຫ້ຄວາມຮູ້ ຄວາມເຂົ້າໃຈ ທັງມີລັກສະນະສຶກສາອົບຮົມ ໄປຕາມແນວທາງ ນະໂຍບາຍຂອງພັກ, ໃຫ້ຄວາມຮູ້ດ້ານລະບຽບກົດໝາຍ,ວິທະຍາສາດ ແລະວິຊາການຕ່າງໆ; ເອົາໃຈໃສ່ໂຄສະນາຕົວແບບ, ວຽກດີຄົນເດັ່ນ; ສົ່ງເສີມວັດທະນະທຳທີ່ມີມູນເຊື້ອອັນດີງາມ ໃຫ້ຮັບໃຊ້ການພັດທະນາເສດຖະກິດ-ສັງຄົມ, ຮັບໃຊ້ການທ່ອງທ່ຽວໃຫ້ຫຼາຍຂຶ້ນ. (ໃຫ້ຈັດສຳມະນາເຜີຍແຜ່ ຄວາມຮູ້ໃນຫຼາຍໆຫົວຂໍ້ ທີ່ສົ່ງເສີມມູນເຊື້ອ ແລະວັດ ທະນາທຳຂອງຊາດ ).

ມາດຕາ 40: ມອບໃຫ້ກົມການປົກຄອງ ສົມທົບກັບກະຊວງການເງິນ ແລະຫ້ອງການປັບປຸງທຸລະກິດ ຂອງສຳນັກງານນາຍົກລັດຖະມົນຕີ ຄົ້ນຄວ້ານະໂຍບາຍເງິນເດືອນພະນັກງານ ແລະກຳມະກອນ ຢູ່ຂົງເຂດລັດວິສາຫະກິດ ເພື່ອເຮັດໃຫ້ພະນັກງານ, ກຳມະກອນເຫຼົ່ານັ້ນ ມີລະດັບເງິນເດືອນທີ່ສົມເຫດສົມຜົນ.

ມາດຕາ 41: ມອບໃຫ້ຄະນະກຳມະການແຜນການ ແລະການຮ່ວມມື ແລະຂະແໜງການທີ່ກ່ຽວຂ້ອງສົມທົບກັນສ້າງແຜນຜັນຂະຫຍາຍ ຈັດຕັ້ງປະຕິບັດ ແຜນງານລຶບລ້າງຄວາມທຸກຍາກ, ທັງນີ້ ກໍ່ເພື່ອແນະນຳລະອຽດໃຫ້ຂະແໜງການ ແລະທ້ອງຖິ່ນ ນຳໄປຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳເທື່ອລະກ້າວ.

ມາດຕາ 42: ໃຫ້ສະຖາບັນຄົ້ນຄວ້າເສດຖະກິດ, ສະຖາບັນອື່ນໆ ຈັດສຳມະນາຫາຄວາມຮູ້ ແລະເຜີຍແຜ່ບົດຮຽນການພັດທະນາ ທີ່ຍືນຍົງ, ໃນຫົວຂໍ້ຕ່າງໆ ກ່ຽວກັບກາລະໂອກາດທີ່ອຳນວຍ ແລະສິ່ງທ້າທາຍຜົນກະທົບທາງລົບ ຂອງໂລກາພິວັດ ແລະການເຊື່ອມໂຍງເສດຖະກິດ ກ່ຽວກັບການຍົກສູງຄວາມສາມາດ ໃນການແຂ່ງຂັນ ແລະ ອື່ນໆ.

ມາດຕາ 43: ໃຫ້ອົງການວິທະຍາສາດ ເຕັກໂນໂລຊີ ແລະສິ່ງແວດລ້ອມ ສະເໜີຫົວຂໍ້ໂຄງການຄົ້ນຄວ້າວິທະຍາສາດການນຳໃຊ້ ສຳລັບຂະແໜງ ທີ່ເຫັນວ່າເໝາະສົມກັບ ສປປ.ລາວ, ໃນນີ້ ນັບທັງໂຄງການຮ່ວມມືຄົ້ນຄວ້າກັບສາກົນ, ໂຄງການກໍ່ສ້າງນັກຄົ້ນຄວ້າ ໃນດ້ານຕ່າງໆ ທັງຢູ່ພາຍໃນ ແລະພາຍນອກ, ສ້າງແຜນລະດົມແຫຼ່ງທຶນ ເຂົ້າໃນການຄົ້ນຄວ້າ ວິທະຍາສາດ-ເຕັກນິກ ຈາກພາຍໃນສົມທົບກັບການຍາດແຍ່ງ ການຊ່ວຍເຫຼືອຈາກຕ່າງປະເທດ, ສ້າງແຜນນຳໃຊ້ຜົນສຳເລັດ ດ້ານວິທະຍາສາດຂອງໂລກ ເຂົ້າໃນການພັດທະນາ; ຄົ້ນຄວ້າ ແລະເກັບກຳພູມປັນຍາ ຂອງປະຊາຊົນໃນການຜະລິດ, ການບໍລິການ ແລະການດຳລົງຊີວິດທີ່ດີ ເພື່ອສົ່ງເສີມ ແລະເຜີຍແຜ່ຈາກທ້ອງຖິ່ນນີ້ ໄປສູ່ທ້ອງຖິ່ນອື່ນໆ.

ມາດຕາ 44: ໃຫ້ກະຊວງຍຸຕິທຳສົມທົບແໜ້ນ ກັບອົງການສານ ແລະອົງການໄອຍະການ ເພື່ອກຳນົດມາດຕະການອັນຈຳເປັນຕ່າງໆ ແນໃສ່ຮັບປະກັນຄວາມຍຸຕິທຳໃນສັງຄົມ, ເຂັ້ມງວດຕໍ່ການປະຕິບັດ ກົດໝາຍ ແລະລະບຽບການຕ່າງໆ ເປັນຕົ້ນ ແມ່ນການປະຕິບັດຄຳຕັດສິນຂອງສານ; ຄົ້ນຄວ້າໂຄງການສ້າງນິຕິກຳເພີ່ມເຕີມ ໃຫ້ນັບມື້ນັບເປັນລະບົບຄົບຖ້ວນ ເທື່ອລະກ້າວ. ພ້ອມທັງຈັດສຳມະນາ ແລະໂຄສະນາເຜີຍແຜ່ ຢ່າງກວ້າງຂວາງ ແນໃສ່ເຮັດໃຫ້ທົ່ວສັງຄົມເຊື່ອມຊຶມ ຢ່າງໜັກແໜ້ນກວ່າເກົ່າ.

ມາດຕາ 45: ຂະແໜງການປ້ອງກັນຊາດ ປ້ອງກັນຄວາມສະຫງົບ ແລະອຳນາດການປົກຄອງທຸກຂັ້ນຕ້ອງເອົາໃຈໃສ່ປັບປຸງ ຍົກຄຸນນະພາບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕາມແນວທາງຂອງພັກ, ແນໃສ່ຮັບປະກັນຄວາມສະຫງົບສຸກ, ຄວາມເປັນລະບຽບຮຽບຮ້ອຍ ໃນສັງຄົມ ເພື່ອໃຫ້ປະຊາຊົນບັນດາເຜົ່າໃນທົ່ວປະເທດ ດຳລົງຊີວິດດ້ວຍຄວາມປອດໄພ, ຕັ້ງໜ້າປະກອບສ່ວນໃນການສ້າງສາພັດທະນາ ປະເທດຊາດ, ຂົນຂວາຍ, ປຸກລະດົມ ແລະຈັດຕັ້ງມະຫາຊົນ ເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຢູ່ຮາກຖານໃຫ້ກວ້າງຂວາງ.

ມອບໃຫ້ກະຊວງປ້ອງກັນປະເທດ, ກະຊວງປ້ອງກັນຄວາມສະຫງົບ ແລະກະຊວງການຕ່າງປະເທດ ສົມທົບກັບຄົ້ນຄວ້າລະບຽບການ ແລະມາດຕະການທີ່ເໝາະສົມ ເພື່ອອຳນວຍຄວາມສະດວກ, ຄຸ້ມຄອງ ແລະຮັບປະກັນຄວາມປອດໄພ ໃຫ້ແກ່ການທ່ອງທ່ຽວ, ນັກທຸລະກິດ,ນັກລົງທຶນ,ນັບທັງຜູ້ຊ່ຽວ ຊານຕ່າງປະເທດ ແນໃສ່ສ້າງສະພາບແວດລ້ອມທີ່ດີ ໃຫ້ແກ່ການທ່ອງທ່ຽວ ແລະການເຄື່ອນໄຫວດຳເນີນທຸລະກິດ ແລະລົງທຶນ ຢູ່ລາວ ຕາມນະໂຍບາຍຂອງລັດຖະບານ.

ມາດຕາ 46: ມອບໃຫ້ອົງການທ່ອງທ່ຽວ ສ້າງໂຄງການປັບປຸງການບໍລິການ ການທ່ອງທ່ຽວທຸກປະເພດ ໃຫ້ໄດ້ມາດຕະຖານເພື່ອດຶງດູດ ນັກທ່ອງທ່ຽວເພີ່ມຂຶ້ນ, ສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນ ແລະເຮັດຂາອອກກັບທີ່ຢູ່ໃນແຕ່ລະທ້ອງຖິ່ນ, ໃຫ້ສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າກະກຽມເງື່ອນໄຂຕ່າງໆ ເປີດດ່ານສາກົນທີ່ເໝາະສົມ, ປະຕິບັດການອອກວີຊາກັບດ່ານ ໃຫ້ກວ້າງກວ່າເກົ່າ, ສ້າງແຜນພັດທະນາພື້ນຖານ ຮອງຮັບດ້ານການທ່ອງທ່ຽວ. ສະເພາະໜ້ານີ້ ຕ້ອງຕັ້ງໜ້າກະກຽມໃຫ້ແກ່ການເປັນເຈົ້າພາບ ກອງປະຊຸມລັດຖະມົນຕີທ່ອງທ່ຽວອາຊຽນ ແລະງານຕະຫຼາດນັດທ່ອງທ່ຽວອາຊຽນ ຢູ່ນະຄອນວຽງຈັນ ໃຫ້ດີ.

ມາດຕາ 47: ມອບໃຫ້ຄະນະກຳມະການແຜນການ ແລະການຮ່ວມມື, ກະຊວງການເງິນ ແລະກະຊວງຂະແໜງການອື່ນໆ, ຄົ້ນຄວ້າສ້າງບົດແນະນຳ ວິທີຈັດຕັ້ງປະຕິບັດ ແລະແຜນດຳເນີນງານລະອຽດ ດ້ານວິຊາສະເພາະທີ່ກ່ຽວຂ້ອງຂອງຕົນ ເພື່ອຜັນຂະຫຍາຍດຳລັດສະບັບນີ້, ໂດຍໃຫ້ລາຍງານ ຕໍ່ກອງປະຊຸມລັດຖະບານ ປະຈຳເດືອນຕຸລາ ຂອງປີ 2003 ນີ້.

ມາດຕາ 48: ມອບໃຫ້ບັນດາ ທ່ານລັດຖະມົນຕີວ່າການ, ຫົວໜ້າອົງການທຽບເທົ່າ, ເຈົ້າຄອງນະຄອນວຽງຈັນ, ເຈົ້າແຂວງ ແລະຫົວໜ້າເຂດພິເສດ ຈົ່ງຮັບຮູ້ ແລະພ້ອມກັນຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ ແລະລາຍງານຜົນ ຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ໃນແຕ່ລະໄລຍະ ຢ່າງເປັນລະບົບປົກກະຕິ.

ມາດຕາ 49: ດຳລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ ວັນທີ 01 ຕຸລາເປັນຕົ້ນໄປ.

ນະຄອນຫຼວງວຽງຈັນ, ວັນທີ 10 ຕຸລາ 2003

**ນາຍົກລັດຖະມົນຕີແຫ່ງ ສ ປ ປ ລາວ**

ບຸນຍັງ ວໍລະຈິດ